ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0817 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 23 ມິຖຸນາ 2022

# ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

ເລື່ອງ: ແຈ້ງປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 168/ຄປຈ, ລົງວັນທີ 06 ມິຖຸນາ 2022.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 631/ຫສນຍ, ລົງວັນທີ 09 ພຶດສະພາ 2022.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ປະຕິບັດລາຄາຂາຍຍ່ອຍໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 30,250 | 21,410 | 22,180 |
| 2 | ແຂວງຜົ້ງສາລີ | 30,890 | 22,050 | 22,820 |
| 3 | ແຂວງຫຼວງນ້ຳທາ | 30,610 | 21,770 | 22,540 |
| 4 | ແຂວງອຸດົມໄຊ | 30,730 | 21,890 | 22,660 |
| 5 | ແຂວງບໍ່ແກ້ວ | 30,350 | 21,510 | 22,280 |
| 6 | ແຂວງຫຼວງພະບາງ | 30,620 | 21,780 | 22,550 |
| 7 | ແຂວງໄຊຍະບູລີ | 30,500 | 21,660 | 22,430 |
| 8 | ແຂວງຫົວພັນ | 30,650 | 21,810 | 22,580 |
| 9 | ແຂວງຊຽງຂວາງ | 30,440 | 21,600 | 22,370 |
| 10 | ແຂວງວຽງຈັນ | 30,250 | 21,410 | 22,180 |
| 11 | ແຂວງບໍລິຄຳໄຊ | 30,330 | 21,490 | 22,260 |
| 12 | ແຂວງຄຳມ່ວນ | 30,280 | 21,440 | 22,210 |
| 13 | ແຂວງສະຫວັນນະເຂດ | 30,280 | 21,440 | 22,210 |
| 14 | ແຂວງສາລະວັນ | 30,460 | 21,620 | 22,390 |
| 15 | ແຂວງຈຳປາສັກ | 30,310 | 21,470 | 22,240 |
| 16 | ແຂວງເຊກອງ | 30,460 | 21,620 | 22,380 |
| 17 | ແຂວງອັດຕະປື | 30,490 | 21,650 | 22,420 |
| 18 | ແຂວງໄຊສົມບູນ | 30,530 | 21,690 | 22,460 |

- ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດ ວັນທີ 24 ມິຖຸນາ 2022; ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
- ການປັບລາຄາຄັ້ງນີ້ ແມ່ນ ໄດ້ປັບຂຶ້ນລາຄາຂາຍຍ່ອຍ ນ້ຳມັນແອັດຊັງພິເສດ 1.820 ກີບ/ລິດ, ລາຄານ້ຳມັນແອັດຊັງທຳມະດາ ປັບຂຶ້ນ 1.250 ກີບ/ລິດ ແລະ ລາຄານ້ຳມັນກາຊວນ ປັບຂຶ້ນ 1.920 ກີບ/ລິດ; ຫຼຸດຄວາມສ່ຽງລົງ 50 ກີບ/ລິດ/ຊະນິດ ແລະ ຫຼຸດຄ່າບໍລິການບໍລິສັດນຳເຂົ້າລົງ 50 ກີບ/ລິດ/ຊະນິດ.
- ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0543/ກຄພນ, ລົງວັນທີ 23 ມິຖຸນາ 2022 ຈົນກວ່າຈະມີການປ່ຽນແປງ.
- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0759/ອຄ, ລົງວັນທີ 16 ມິຖຸນາ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ເຊັນແທນລັດຖະມົນຕີ

ຮອງລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ... ລັດຖະມົນຕີ

ນ.ຈັນສຸກ ແສງພະຈັນ

<u>ບ່ອນສົ່ງ</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).